Declaration on Fundamental Principles and Rights at Work

WORK IN FREEDOM

International Labour Office

# ການບັງຄັບໃຊ້ແຮງງານໃນອາຊີ

**ສະພາບໂດຍລວມ**

ພູມມິພາກອາຊີປາຊີຟິກກຳລັງປະເຊີນໜ້າກັບ ບັນຫາການບັງຄັບໃຊ້ແຮງງານທັ້ງໃນ ແບບດັ້ງເດີມແລະແບບໃໝ່. ການນຳໃຊ້ແຮງງານ ເພື່ອຫລຸດໜີ້ຍັງຄົງເປັນຊະຕາກຳ ອັນນ້າເຊົ້າສຳລັບຜູ້ຍິງຜູ້ຊາຍ ແລະ ເດັກນ້ອຍທີ່ມີຖານະຍາກຈົນທີ່ສຸດທີ່ມີຈຳນວນຫລາຍ ໃນປະເທດແຖບອາຊີໃຕ້ບາງປະເທດ. ການຄ້າມະນຸດເພື່ອ ການບັງຄັບໃຊ້ບໍລິການທາງເພດ ກຳລັງເພີ່ມຈຳນວນຂື້ນ.

ການບັງຄັບໃຊ້ແຮງງານກຳລັງປ່ຽນແປງຮູບແບບໄປ ດັ່ງຈະເຫັນໄດ້ຈາກການທີ່ແຮງງານ ຂັດໜີ້ທີ່ຍັງຄົງເກີດຂື້ນຫລາຍໃນພາກກະສິກຳນັ້ນໄດ້ແພ່ຂະຫຍາຍໄປສູ່ພາກອື່ນໆຫລາຍຂື້ນເຊັ່ນການບໍລິການຮັບໃຊ້ໃນເຮືອນ, ການເຜົາດິນຈີ່, ການສີເຂົ້າ, ການເຮັດເໝືອງ, ການລະເບີດຫີນ ແລະ ການທໍພົມ. ພູມມິພາກນີ້ຍັງເປັນແຫລ່ງຂອງກໍລະນີປັນຫາ ຮ່ວມສະໄໝທີ່ດັ່ງດັງ ໄປທົ່ວໂລກໃນການບັງຄັບໃຊ້ແຮງງານໂດຍພາກລັດໂດຍປະເທດພາຄີສະມາຊິກຂອງອົງການແຮງງານສາກົນ(ILO)ເອງນັ້ນຄືປະເທດພະມ້າ.

ຄວາມຍາກຈົນແລະການເລືອກປະຕິບັດເຮັດໃຫ້ເກີດປັດໃຈຕ່າງໆທີ່ເຮັດໃຫ້ການບັງຄັບໃຊ້ແຮງງານຍັງຄົງຢູ່ແລະໃນຂະນະດຽວກັນລະບົບການບັງຄັບໃຊ້ແຮງງານແລະການໃຊ້ແຮງງານຂັດໜີ້ກໍ່ຍັງເຮັດໃຫ້ກຸ່ມຄົນທີ່ດ້ອຍໂອກາດຕ້ອງຕົກຢູ່ໃນຄວາມຍາກຈົນຢ່າງແສນສາຫັດຕໍ່ໄປ. ແມ້ວ່າບາງປະເທດໃນພູມິພາກນີ້ຈະໄດ້ອອກກົດໝາຍເພື່ອຕໍ່ຕ້ານການບັງຄັບໃຊ້ແຮງງານໃນຮູບແບບຕ່າງໆຢ່າງຈິງຈັງແລ້ວ, ແຕ່ການຂາດການບັງຄັບ ໃຊ້ກົດໝາຍຢ່າງເຄັ່ງຄັດເຮັດໃຫ້ ຜູ້ກະທຳຜິດກົດໝາຍສ່ວນໃຫຍ່ຍັງລອຍນວນຢູ່ໄດ້.

**ສະຖິຕິສຳຄັນ**

- ປະຊາກອນປະມານ 9.5 ລ້ານຄົນຕົກເປັນເຫຍື່ອຂອງຜູ້ໃຊ້ແຮງງານໃນພູມິພາກອາຊີປາຊີຟິກເຊິ່ງມີອັດຕາສ່ວນ ຫລາຍກ່ວາສາມສ່ວນສີ່ຂອງເຫຍື່ອທັງຫມົດ ທີ່ມີຈຳນວນ 12.3 ລ້ານຄົນໃນທົ່ວໂລກ.
- ແຮງງານທີ່ຖືກບັງຄັບສ່ວນໃຫຍ່ໃນພູມິພາກນີ້ເກືອບສອງໃນສາມຫຼື 6 ລ້ານຄົນ ຖືກນາຍຈ້າງບັງຄັບໃຊ້ແຮງງານເພື່ອຜົນປະໂຫຍດ ທາງທຸລະກິດໃນພາກກະສິກຳ ແລະພາກເສດຖະກິດອື່ນໆ. ແຮງງານທີ່ຖືກບັງຄັບໃຊ້ບໍລິການທາງເພດ ມີອັດຕາສ່ວນ ນ້ອຍກ່ວາ 10% ຂອງແຮງງານທັງໝົດ ການບັງຄັບໃຊ້ແຮງງານປະມານ 20% (ເຊິ່ງສົ່ງ ຜົນກະທົບກັບປະຊາຊົນປະມານ 1.9 ລ້ານຄົນ) ເກີດຈາກພາກລັດ ແລະ ເກີດຂື້ນຫຼາຍ ໃນປະເທດ.
- ປະຊາຊົນປະມານ 1.4 ລ້ານຄົນໃນພູມິພາກ ອາຊີແປຊີຟິກ ຕົກເປັນເຫຍື່ອ ຂອງການຄ້າມະນຸດໃຫ້ກັບ ການບັງຄັບໃຊ້ແຮງງານ ຊື່ງມີອັດຕາສ່ວນປະມານ 55% ຂອງເຫຍື່ອຂອງຂະບວນການຄ້າມະນຸດທົ່ວໂລກ ນີ້ໝາຍຄວາມວ່າຄົນອີກ 8.1 ລ້ານຄົນ ທີ່ເຫລືອຕົກເປັນເຫຍື່ອຂອງການບັງຄັບໃຊ້ແຮງງານດ້ວຍ ສາເຫດອື່ນທີ່ນອກຈາກການຄ້າມະນຸດຊື່ງສາເຫດຫຼັກກໍ່ຄືພັນທະທີ່ເກີດຈາກໜີ້.
- ກຳໄລຈາກການບັງຄັບໃຊ້ແຮງງານທີ່ໄດ້ຈາກການຄ້າມະນຸດໃນພູມິພາກອາຊີແປຊີຟິກນັ້ນຄາດວ່າມີມູນຄ່າປີລະ 9.7 ພັນລ້ານໂດລາ.

**ສະຖານະການປະຈຸບັນ.**

- ການໃຊ້ແຮງງານຂັດໜີ້ເປັນຮູບແບບການບັງຄັບໃຊ້ແຮງງານສ່ວນໃຫຍ່ໃນພູມິພາກນີ້ຊື່ງເປັນບັນຫາໃຫຍ່ໃນປະເທດແຖບອາຊີໃຕ້ຄື: ອິນເດຍ,ເນປານ ແລະ ປາກີສະຖານ. ການບັງຄັບໃຊ້ແຮງງານຂັດໜີ້ນີ້ມັກເລີ້ມຈາກການທີ່ຄົນຍາກຈົນບໍ່ມີທາງເລືອກອື່ນນອກຈາກຈະຕ້ອງກູ້ຢືມເງິນຫຼືເບີກຄ່າແຮງລ່ວງໜ້າຈາກນາຍຈ້າງເພື່ອຊຳລະຄ່າໃຊ້ຈ່າຍສຸກເສີນຫຼືຄ່າໃຊ້ຈ່າຍສຳຄັນທາງສັງຄົມ. ໃນພາຍຫຼັງພົບວ່າຕົນບໍ່ ສາມາດໃຊ້ໜີ້ໄດ້ດ້ວຍ ສາເຫດຫຼາຍປະການ ເຊັ່ນ:ດອກເບ້ຍ ອັດຕາສູງ, ຄ່າແຮງຕ່ຳ ແລະ ວັດຖຸດິບດ້ານກະສິກຳ ແລະ

ວັດຖຸດິບທີ່ສຳຄັນອື່ນໆທີ່ມີລາຄາສູງເກີນ ໄປອັນເນື່ອງມາຈາກ ເຈົ້າຂອງທີ່ດິນ ຫຼືນາຍຈ້າງການບໍ່ຮູ້ໜັງສືຍິ່ງເຮັດໃຫ້ບັນຫາຮ້າຍແຮງລົງເພາະລູກໜີ້ບໍ່ຮູ້ຈັກເກັບບັນທຶກຫຼືພິສູດການຊຳລະໜີ້ ແລະ ສ່ວນໃຫຍ່ບໍ່ມີການເຮັດສັນຍາການກູ້ຢືມເປັນ ລາຍລັກອັກສອນ ຕັ້ງແຕ່ທຳອິດ, ມີການໃຊ້ຄວາມຮຸນແຮງ ແລະ ຂູ່ທີ່ຈະໃຊ້ຄວາມຮຸນແຮງເພື່ອບັງ ຄັບໃຫ້ໃຊ້ແຮງງານເພື່ອຂັດໜີ້ ແລະ ຍັງມີວິທີການທີ່ແຍບຍົນກ່ວານັ້ນຄືການຂູ່ວ່າຈະເລີກຈ້າງທີ່ຮ້າຍແຮງທີ່ສຸດຄືເດັກນ້ອຍຖືກແຍກອອກ ຈາກຄອບຄົວເພື່ອໄປເປັນແຮງງານ ຂັດໜີ້ ແລະ ອາດ ຕ້ອງຮັບພາລະໜີ້ສິນຕໍ່ຈາກພໍ່ແມ່ອີກດ້ວຍ.

- ສະພາບເສດຖະກິດທີ່ແຕກຕ່າງກັນໃນອະນຸພາກພື້ນລຸ່ມແມ່ນ້ຳຂອງເຮັດໃຫ້ເກີດການຄ້າຜູ້ຍິງ ແລະ ເດັກນ້ອຍຈາກປະເທດ ມຽນມາ, ລາວ ແລະ ກຳປູເຈຍ ສູ່ປະເທດໄທ. ຜູ້ຍິງ ແລະ ເດັກນ້ອຍຈາກ ອິນໂດເນເຊຍ ແລະ ຟີລິບປິນ ຖືກຄ້າໃຫ້ແກ່ ການບັງຄັບໃຊ້ບໍລິການທາງເພດໃນປະເທດປາຍທາງ ເຊັ່ນ: ອິດສະຕາລີ, ຈີນ. ເຂດປົກຄອງພິເສດມີ ຮົງກົງ, ຍີ່ປຸ່ນ, ເກົາຫຼີໃຕ້ ແລະ ໄຕ້ຫວັນ ມີການຄ້າມະນຸດ ຈາກປະເທດເຫຼົ່ານີ້ເພື່ອ ການບັງຄັບໃຊ້ແຮງງານຈຳນວນຫຼາຍສຳລັບວຽກງານຮັບ ໃຊ້ຢູ່ເຮືອນໃນ ມາເລເຊຍ, ສິງກະໂປ ແລະ ຮົງກົງ. ຍີ່ປຸ່ນ ແລະ ອິດສະຕາລີ ເປັນຕົວຢ່າງ ຂອງປະເທດປາຍທາງທີ່ຜູ້ຍິງເຂົ້າປະເທດດ້ວຍວີຊ່າ " ທຸລະກິດບັນເທີງ " ໂດຍຫວັງ ຈະໄປເຮັດວຽກໃນສະຖານເຕັ້ນລຳແຕ່ກັບຖືກບັງຄັບໃຫ້ບໍລິການທາງເພດ.
- ສາເຫດສຳຄັນຂອງການຄ້າມະນຸດ ແລະ ການອົບພະຍົກ ທີ່ບໍ່ຖືກຕ້ອງ ປະກອບດ້ວຍຄວາມຍາກ ຈົນ, ໜີ້ສິນ ແລະ ການດ້ອຍໂອກາດທາງດ້ານການສຶກສາ, ການບໍ່ມີວຽກເຮັດງານທຳໃນຊຸມຊົນຊົນ ນະບົດຂອງຕົນ, ການກີດກັນທາງສັງຄົມ ແລະ ການຫຼົງແສງສີຂອງເມືອງໃຫຍ່. ຜູ້ຍິງ ແລະ ເດັກ ນ້ອຍບາງຄົນຖືກຂາຍ ໃຫ້ກັບທຸລະກິດທາງເພດ ໃນຂະນະທີ່ຄົນອື່ນຖືກຄ້າໃຫ້ກັບ ການໃຊ້ແຮງງານໃນບ້ານຫຼືການເຮັດກະສິກຳຕາມລະດູການຕະຫຼອດຈົນຂະບວນການຂໍທານ ແລະ ການຄ້າປະເວນີ. ILO ໄດ້ທຳການວິໄຈໃນພູມິພາກລຸ່ມແມ່ນ້ຳຂອງ ແລະ ພົບວ່າການບັງຄັບ ໃຊ້ແຮງງານສ່ວນໃຫຍ່ ເກີດຈາກການ ອົບພະຍົກໂດຍສະມັກໃຈ ໃນຂະນະທີ່ຂາດ ການກຽມຕົວທີ່ດີ ແລະ ຮູ້ເທົ່າບໍ່ເຖິງການ.

- ຄົນງານອົບພະຍົກຈາກ ສີລັງກາ, ຟີລິປິນ ແລະ ອິນໂດເນເຊຍ ຕ້ອງເສຍຊີວິດ ຢ່າງມີເງື່ອນງຳ ໃນ ປະເທດແຖບຕາເວັນອອກກາງ ຫຼາຍປະເທດ ໃນ ຂະນະທີ່ຄົນງານອື່ນໆຖືກລົງໂທດຢ່າງທາລຸນໃນຮົງກົງ ແລະ ສິງກະໂປ ,ມີການດຳເນີນຄະດີ ກ່ຽວກັບການທີ່ນາຍຈ້າງທາລຸນຄົນຮັບໃຊ້ທີ່ເປັນຄົນອົບພະຍົກຫຼາຍລາຍນັບຕັ້ງແຕ່ປີ 2000.
- ໃນປະເທດຈີນການອົບພະຍົກຈຳນວນຫຼາຍພາຍໃນປະເທດ ຈາກເຂດຊົນນະບົດ ສູ່ເມືອງຫຼວງເຮັດໃຫ້ຜູ້ຍິງ ແລະໂດຍສະເພາະຢ່າງ ຍິ່ງເດັກຍິງຈຳນວນຫຼາຍ ຕ້ອງສ່ຽງກັບການຖືກເອົາປຽບທາງແຮງງານ ແລະ ທາງເພດຫຼາຍ. ຜູ້ອົບພະຍົກຊາວ ຈີນຫຼາຍຄົນຍັງຕົກເປັນເຫຍື່ອຂອງການລັກລອບນຳ ແຮງງານ ແລະ ການຄ້າມະນຸດ ສູ່ພື້ນທີ່ທຸລະກິດຂອງຊົນກຸ່ມນ້ອຍຕ່າງໆ. ໃນທະວີບຍຸໂລບ ແລະ ອາເມລິກາເໜືອ ທີ່ຊຶ່ງພວກເຂົາຕ້ອງຖືກໃຊ້ງານຄືທາດໃນໂຮງງານນະລົກ, ພັດຕະຄານ ແລະ ໃນບ້ານ.
- ຄົນໃຊ້ໃນບ້ານກຳລັງ ປະເຊີນການກົດຂີ່ແບບໃໝ່ໃນບາງຄັ້ງງານທີ່ມີໂອກາດ ໄດ້ເລືອກເຮັດໃນຕອນທຳອິດກັບກາຍເປັນກັບດັກເພາະຕ້ອງຖືກເອົາປຽບໃນພາຍຫຼັງ, ໃນບາງກໍລະນີຜູ້ຍິງ ແລະ ເດັກຜູ້ຍິງ ຖືກຄ້າໃຫ້ກັບການໃຫ້ບໍລິການຮັບໃຊ້ໃນບ້ານ, ໃນຕ່າງປະເທດ. ການບັງຄັບໃຊ້ແຮງງານ ເກີດຂື້ນ ເມື່ອຄົນງານຖືກກັກຢູ່ໃນບ້ານ ຂອງນາຍຈ້າງຖືກທາລຸນດ້ວຍການກະທຳທາງກາຍ, ທາງວາຈາ ຫຼືທາງເພດ ແລະ ຖືກຫ້າມບໍ່ໃຫ້ອອກຈາກງານໂດຍສະເພາະຢ່າງຍິ່ງເມື່ອໜັງສືເດີນທາງ ແລະ ເອກະສານສະແດງຕົນຕ່າງໆຖືກຍຶດໄວ້.
- ໃນມຽນມາມີການເກນແຮງງານຈຳນວນຫຼາຍຈາກບັນດາຊາວບ້ານ (ຜູ້ຊາຍ, ຜູ້ຍິງ, ເດັກ ແລະ ຄົນສູງອາຍຸ) ເພື່ອວັດຖຸປະສົງຫຼາຍປະການ ເຊັ່ນ:ເພື່ອເຮັດກະສິກຳ, ແບກຫາບ, ເຝົ້າຍາມຕະຫຼອດ ຈົນສ້າງ ແລະ ແປງທາງ ຫຼື ຂົວ ຖ້າຊາວບ້ານ ຝ່າຝືນຄຳສັ່ງກໍ່ອາດຖືກຂູ່ຈອງຈຳ ແລະ ຖືກທຳຮ້າຍ.

**ສິ່ງທີ່ກຳລັງດຳເນີນການ**

ລັດຖະບານອິນເດຍ, ເນປານ ແລະ ປາກີສະຖານ ໄດ້ອອກກົດໝາຍຕໍ່ຕ້ານລະບົບການໃຊ້ແຮງງານ ຂັດໜີ້ຊຶ່ງປະສົບຜົນສຳເລັດໃນລະດັບທີ່ແຕກຕ່າງກັນ. ປະຊາຊົນ 18,000 ຄົນທີ່ພິສູດວ່າເປັນອະດີດ ແຮງງານຂັດໜີ້ໄດ້ຮັບການຟື້ນຟູ ຊຶ່ງຮ່ວມເຖິງ

ການໄດ້ຮັບທີ່ດິນ ແລະ ວັດຖຸສ້າງບ້ານສຳລັບຜູ້ທີ່ຍາກຈົນ ທີ່ສຸດຕະຫຼອດຈົນຄວາມຊ່ວຍເຫລືອອື່ນໆອີກຫຼາຍປະການ ເຊັ່ນ: ການຝຶກອາຊີບ ແລະ ສິນເຊື່ອຈຳນວນ ນ້ອຍ. ເຖິງຢ່າງໃດກໍ່ຕາມສະຖານະການ ທາງການເມືອງ ໃນປະເທດເນປານ ໃນປະຈຸບັນກຳລັງເປັນອຸປະສັກຕໍ່ໂຄງການຕ່າງໆທີ່ ILO ກຳລັງດຳເນີນການຢູ່.
ທີ່ອິນເດຍ “ ໂຄງການສະໜັບສະໜູນຈາກສ່ວນກາງ ” ຂອງລັດຖະບານ ໄດ້ນຳຄວາມຊ່ວຍເຫຼືອໃນ ຮູບຂອງເງິນ ແລະ ສິ່ງຂອງ ຫຼື ບໍລິການຕ່າງໆ ໄປໃຫ້ແກ່ແຮງງານ ຂັດໜີ້ທີ່ໄດ້ຮັບອິດສະຫຼະແລ້ວຮ່ວມ ທັງສະມາຊິກໃນຄອບຄົວຂອງຄົນເຫຼົ່ານີ້ດ້ວຍ. ໂຄງການນີ້ໄດ້ຊ່ວຍເຫຼືອປະຊາຊົນຈຳນວນກ່ວາ 285,000 ຄົນແລ້ວໃນຂະນະນີ້ມີການດຳເນີນຄະດີເກືອບ 5,000 ຄະດີແລ້ວພາຍໃຕ້ກົດໝາຍລະບົບ ແຮງງານຂັດໜີ້ (ການເລີກທາດ) ໃນປີ ຄ.ສ. 1976 . ໃນປີ 2001 ໃນປາກີສະຖານອອກນະໂຍບາຍ ແລະ ແຜນປະຕິບັດການແຫ່ງຊາດວ່າດ້ວຍການເລີກໃຊ້ແຮງງານຂັດໜີ້ຊຶ່ງໃຫ້ກອບດຳເນີນການແກ້ໄຂບັນຫາການໃຊ້ແຮງງານລັກສະນະນີ້ໃນການກະສິກຳ ແລະ ການເຜົາດິນຈີ່ ໃນແຄ້ວນສິນທຸ ແລະ ປັນຈາບ.

ໃນປະເທດຕ່າງໆໃນທະວີບອາຊີຄົນຮັບໃຊ້ໃນບ້ານບໍ່ໄດ້ຮັບການຍອມຮັບວ່າ ເປັນຄົນງານ ແລະ ຖືກລະເມີດສິດທິທາງແຮງງານ. ເພື່ອແກ້ໄຂບັນຫານີ້ຟິລິປິນ ແລະ ອິນໂດເນເຊຍໄດ້ຮ່າງກົດໝາຍຂື້ນ ເພື່ອປະກັນຄ່າແຮງຂັ້ນຕ່ຳໃຫ້ຄົນຮັບໃຊ້ໃນບ້ານ ແລະກຳນົດຊົ່ວໂມງເຮັດວຽກ ແລະ ຜົນປະໂຫຍດ ຕ່າງໆຄືກັບທີ່ຄົນງານ ໃນພາກພື້ນອື່ນໆໄດ້ຮັບ. ໃນບໍ່ດົນມານີ້ ປະເທດຍີ່ປຸ່ນເລີ່ມໃຊ້ມາດ ຕະການຕ່າງໆ ເພື່ອຢຸດຕິການເອົາປຽບຜູ້ທີ່ເປັນຜູ້ອົບພະຍົກ ແລະ ເປັນເຫຍື່ອຂອງຂະບວນການຄ້າມະນຸດຊຶ່ງລວມເຖິງການບັງຄັບໃຊ້ກົດຕ່າງໆຢ່າງເຄັ່ງຄັດເພື່ອຄວບຄຸມການອອກ ວີຊ່າສຳລັບທຸລະກິດບັນເທີງ, ການໃຫ້ ເງິນຊ່ວຍເຫຼືອເພື່ອເປັນຄ່າໃຊ້ຈ່າຍໃຫ້ເຫຍື່ອເດີນທາງກັບບ້ານ ແລະການຮ່ວມມືຢ່າງໃກ້ຊິດກັບປະ ເທດຂອງຜູ້ປະສົບບັນຫາເຫຼົ່ານີ້.

ລັດຖະບານອິດສະຕາລີ ແລະ ອິນໂດເນເຊຍ ໄດ້ລິເລີ່ມ “ຂະບວນການບາຫລີ” ເພື່ອອອກມາດຕະການທີ່ໃຊ້ປະຕິບັດໄດ້ໃນລະດັບພູມິພາກເພື່ອຕໍ່ຕ້ານການຄ້າມະນຸດ ແລະການລັກລອບນຳແຮງງານ ເຖື່ອນຂ້າມປະເທດ ,ຂະບວນການນີ້ໄດ້ປຸ່ງນຫຼັກການ ທີ່ເປັນ

ພຽງຄຳເວົ້າອັນສວຍງາມໃຫ້ກາຍເປັນມາດຕະການທີ່ໄດ້ຜົນໃນທາງປະຕິບັດ ແລະ ໃນ ຂະນະດຽວກັນມີການໃຫ້ຄວາມສຳຄັນກັບ ການປ້ອງກັນ ການຄ້າມະນຸດ ແລະ ຄຸ້ມຄອງ ເຫຍື່ອຫຼາຍ ກ່ວາການປາບປາມການລັກລອບນຳ ແຮງງານເຖື່ອນຂ້າມຊາດອີກດ້ວຍ.

ໃນປະເທດຈີນມີລາຍງານການຈັບກຸ່ມ ແລະ ດຳເນີນຄະດີຫົວໜ້າເຄືອ ຂ່າຍຄ້າມະນຸດຫຼາຍລາຍ ແລະ ມີການເພີ່ມໂທດໃຫ້ຮຸນແຮງຂື້ນ. ໃນຊ່ວງປີ 2001 ຫາ 2003, . ລັດຖະບານໄດ້ສອບສວນການຄ້າ ມະນຸດກ່ວາ 20,000 ຄະດີ ໄດ້ຊ່ວຍເຫຼືອຜູ້ຍິງ ແລະ ເດັກນ້ອຍ 43,215 ຄົນໃຫ້ປອດໄພ ແລະ ຈັບກຸມ ນັກຄ້າມະນຸດ 22,018 ຄົນ. ຈາກນີ້ລັດຖະບານກຳລັງດຳເນີນການເພື່ອປ້ອງກັນບໍ່ໃຫ້ມີການ ລັກ ລອບ ໜີອອກນອກ ປະເທດເພື່ອໄປຫາວຽກເຮັດໃນປະເທດອື່ນ, ໂດຍໄດ້ ປາບປາມບໍລິສັດ ນາຍໜ້າແຮງງານເຖື່ອນແລ້ວຫຼາຍຮ້ອຍລາຍ.

**ຕົວຢ່າງການປະຕິບັດງານຂອງ ILO**

ໂຄງການປະຕິບັດການພິເສດເພື່ອເອົາຊະນະການບັງຄັບໃຊ້ແຮງງານ (Special Action Programme to combat Forced Labour: SAP-FL) ໄດ້ດຳເນີນການສຶກສາການບັງຄັບໃຊ້ແຮງງານ, ລົນນະລົງ, ໃຫ້ຄຳແນະນຳ, ຝຶກອົບຮົມ ແລະ ເພີ່ມພູນສັກກະຍາພາບຕ່າງໆໃນປະເທດພາຄີສະມາຊິກ ຕະຫຼອດຈົນຈັດໂຄງການປ້ອງກັນ ແລະ ຟື້ນຟູໃນລະດັບຊຸມຊົນໂດຍຮ່ວມງານຢ່າງໃກ້ຊິດກັບ ລັດຖະບານ ແລະ ຫຸ້ນສ່ວນທາງສັງຄົມໃນປະເທດຕ່າງໆ.

ILO ດຳເນີນໂຄງການຄວາມຮ່ວມມືທາງເທັກນິກໃນປະເທດອິນເດຍ, ປາກີສະຖານ ແລະ ເນປານ ເພື່ອແກ້ໄຂບັນຫາການໃຊ້ແຮງງານຂັດໜີ້ ແລະ ຊ່ວຍລັດຖະບານ ຂອງປະເທດເຫຼົ່ານີ້ດຳເນີນໂຄງການ ຟື້ນຟູສະພາບຄອບຄົວຂອງແຮງງານ ຂັດໜີ້ທີ່ໄດ້ ຮັບອິດສະຫຼະ ແລະ ຕອບສະໜອງຄວາມຕ້ອງການ ຂອງຄົນທີ່ໜ້າສົງສານ ທີ່ສຸດໃນ ໝູ່ ຄົນຍາກຈົນໂດຍສະເພາະຢ່າງຍິ່ງຜູ້ຍິງຊຶ່ງມັກຕົກເປັນເຫຍື່ອຂອງກັບ ດັກແຫ່ງນີ້ໄດ້ ງ່າຍທີ່ສຸດ,

ການດຳເນີນການ ທີ່ສຳຄັນປະການໜຶ່ງ ຄືການຮ່ວມງານ ກັບສະຖາບັນ ສິນເຊື່ອ ແລະ ຮາກຖານເພື່ອຊ່ວຍເຫຼືອຄົນເຫຼົ່ານີ້ໃຫ້ມີການອອມຊັບແບບພິເສດ ມີເງິນ ກູ້ ແລະ ໄດ້ຮັບບໍລິການ ດ້ານການເງິນອື່ນໆ ເຊັ່ນ: ການປະກັນຊີວິດ ເພື່ອທີ່ຄອບຄົວ ຂອງຄົນເຫຼົ່ານີ້ຈະໄດ້ບໍ່ຕ້ອງຫັນໄປກູ້ເງິນ ຈາກນາຍຈ້າງ ແລະ ເຈົ້າຂອງທີ່ດິນຂອງ ຕົນອີກ, ຢ່າງໃດກໍ່ຕາມສະຖານະການທາງການເມືອງໃນ ປະ ຈຸບັນພາຍໃນປະເທດ
ເນປານກຳລັງເປັນອຸປະສັກສຳຄັນຕໍ່ຜົນສຳເລັດຂອງໂຄງການດັ່ງກ່າວ.
ILO ກຳລັງຊ່ວຍປະເທດອິນໂດເນເຊຍ ແລະ ຟີລິປີນສົ່ງເສີມກິດຈະກຳ ຂອງ ບັນດາອົງກອນຂອງຜູ້ຮັບໃຊ້ ໃນບ້ານ ແລະ ສ້າງສຳພັນກັບ ອົງກອນຜູ້ອົບພະຍົກ ຕ່າງໆ ໃນປະເທດປາຍທາງທີ່ຢູ່ໃກ້ຄຽງຢ່າງມາເລເຊຍ ແລະ ເຂດປົກຄອງພິເສດຮົງກົງ.

ໃນພູມິພາກລຸ່ມແມ່ນ້ຳຂອງມີການດຳເນີນໂຄງການຕໍ່ຕ້ານການຄ້າມະນຸດໃນລຸ່ມນ້ຳຂອງ ເພື່ອປ້ອງກັນບໍ່ໃຫ້ມີການອົບພະຍົກໂດຍຮູ້ເທົ່າບໍ່ເຖິງການຂອງກຸ່ມຄົນທີ່ຕົກຢູ່ໃນຄວາມ ສ່ຽງ ເຊັ່ນ:ຜູ້ຍິງ ແລະ ເດັກນ້ອຍ ຊຶ່ງມັກຈະຕົກເປັນເຫຍື່ອຂອງ ການບັງຄັບໃຊ້ ແຮງງານ ຜ່ານຂະບວນການຄ້າມະນຸດໄດ້ງ່າຍ.

ໂຄງການສຳຄັນຂອງ ILO ເພື່ອຕໍ່ຕ້ານ ການຄ້າຜູ້ຍິງ ແລະ ເດັກຜູ້ຍິງລະຫວ່າງປະເທດ ກຳປູເຈຍ, ມົນທົນຢູນານຂອງຈີນ, ຫວຽດນາມ, ສາທາລະນະລັດ ປະຊາທິປະໄຕ ປະ ຊາຊົນລາວ ແລະ ໄທ ສາມາດລຸດຄວາມສ່ຽງທີ່ເດັກຜູ້ ຍິງ ແລະ ຜູ້ສາວຈະຕົກ ເປັນເຫຍື່ອຂອງ ຂະບວນການຄ້າມະນຸດໄດ້ດ້ວຍການເຕືອນໃຫ້ເຫັນອັນຕະລາຍ ຈາກ ການອົບພະຍົກຢ່າງຮູ້ເທົ່າບໍ່ເຖິງການ. ໂຄງການໄດ້ສົ່ງເສີມ ໃຫ້ປະຊາຊົນ ເຫຼົ່ານີ້ຫັນມາຮ່ວມແກ້ໄຂ ບັນຫາຕ່າງໆທີ່ຢູ່ໃນ ຊຸມຊົນຂອງຕົນເຊິ່ງ ເປັນບັນຫາ ທີ່ຜັກດັນ ໃຫ້ຄົນໃນຊຸມຊົນຕ້ອງອົບພະຍົກໄປຢູ່ທີ່ອື່ນ.

ໃນປະເທດຈີນ ILO ມີໂຄງການໃໝ່ເພື່ອເພີ່ມຄວາມສາມາດຂອງລັດຖະບານ ແລະ ສະຖາບັນແຮງງານຕ່າງໆ ໃນການບັງ ຄັບໃຊ້ກົດໝາຍປາບປາມການຄ້າມະນຸດ. ໂຄງການນີ້ມີການຮວບຮວມຂໍ້ມູນຕ່າງໆ ພິສູເອກະລັກຂອງ ເຫຍື່ອ ແລະ ດຳເນີນກົດ

ຈະກຳຕ່າງໆ ທີ່ກ່ຽວກັບການບັງຄັບໃຊ້ກົດໝາຍ ແລະ ການດຳເນີນນະໂຍບາຍ ຕ່າງໆ ໃນແຂວງທີ່ມີຄົນອົບພະຍົກອອກໄປຢູ່ບ່ອນອື່ນເປັນຈຳນວນຫຼາຍ.

ໃນປະເທດຫວຽດນາມ ILO ໄດ້ໃຫ້ຄວາມຊ່ວຍເຫຼືອທາງ ເທັກນິກແກ່ຄະນະ ເຮັດວຽກລະຫວ່າງກະຊວງເພື່ອແກ້ໄຂບັນຫາການບັງຄັບໃຊ້ແຮງງານຊຶ່ງຈັດຕັ້ງຂຶ້ນເພື່ອທົບທວນ ບັນຫາກົດໝາຍ ແລະ ການປະຕິບັດກ່ຽວກັບການບັງຄັບໃຊ້ ແຮງງານ ແລະ ເພື່ອສຶກສາສະຖານະການການບັງຄັບໃຊ້ແຮງງານທົ່ວປະເທດ. ຄະນະເຮັດວຽກນີ້ປະສົບ ຄວາມສຳເລັດໃນການກະຕຸ້ນໜ່ວຍງານຕ່າງໆຂອງພາກລັດພາຍໃຕ້ການນຳຂອງກະຊວງແຮງງານ, ການຮັກສາພະຍາບານ ແລະ ການສັງຄົມໃຫ້ລົງມະຕິເພື່ອດຳເນີນການຕ່າງໆ ໃນອັນທີ່ຈະຢຸດຕິການບັງ ຄັບໃຊ້ແຮງງານໃນປະເທດຫວຽດນາມ.

ໃນປເທດມົງໂກນໄດ້ມີການສຳຫຼວດການດຳເນີນງານຕ່າງໆທີ່ອາດເປັນການບັງຄັບ ໃຊ້ແຮງງານຊຶ່ງ ລວມເຖິງການບັງຄັບໃຫ້ເຮັດວຽກລ່ວງເວລາໃນພາກອຸດສະຫະກຳ ແລະ ການ ນຳນັກໂທດໄປເປັນແຮງ ງານໃຫ້ກັບບໍລິສັດເສື້ອຜ້າ ແລະ ສິ່ງທໍຕ່າງໆ.